Food and Agriculture Organization of the United Nations

# ພະຍາດອະຫິວາໝູອາຟຣິກາ (ASF)

**ຢ່າປ່ອຍໃຫ້ໝູຂອງທ່ານຕາຍຍ້ອນພະຍາດອະຫິວາໝູອາຟຣິກາ (ASF)!**

ໃຫ້ປະຕິບັດຕາມມາດຕະການທີ່ເປັນພື້ນຖານຄວາມປອດໄພທາງຊີວະພາບເພື່ອ ໃຫ້ຟາມຂອງທ່ານປາດສະຈາກພະຍາດອະຫິວາໝູອາຟຣິກາ (ASF):

## 1.ສຸຂະອະນາໄມສ່ວນຕົວ



ປ່ຽນເຄື່ອງນຸ່ງ ແລະ ເກີບໂບກທຸກຄັ້ງກ່ອນມາດູແລໝູຂອງທ່ານ



ລ້າງມືໃຫ້ສະອາດດ້ວຍສະບູ



ຂ້າເຊື້ອເກີບໂບກທຸກຄັ້ງກ່ອນເຂົ້າຄອກໝູ

## 2. ດູແລຟາມ/ຄອກໝູໃຫ້ສະອາດຮຽບຮ້ອຍ



ອະນາໄມຟາມລ້ຽງສັດ ແລະ ຄອກໝູໃຫ້ເປັນປົກກະຕິ



ທຳຄວາມສະອາດເຄື່ອງມືທີ່ນຳ ໃຊ້ເຂົ້າໃນການລ້ຽງໝູ



ສີດນ້ຳຢາຂ້າເຊື້ອ ຫຼື ໂຮຍຝຸ່ນປູນຂາວເພື່ອຂ້າເຊື້ອເລື້ອຍໆ

## 3.ອາຫານ



ບໍ່ແນະນຳໃຫ້ນຳເອົາເສດອາຫານມາເກືອໝູ




ຖ້າຈະເກືອ, ຕ້ອງຕົ້ມເສດອາຫານໃນອຸ່ນະພູມ (100 ອົງສາ, 30 ນາທີ) ແລ້ວຄົນໃຫ້ເຂົ້າກັນດີກ່ອນເກືອໝູ



ຫ້າມນຳໃຊ້ນ້ຳທີ່ໃຊ້ລ້າງຊີ້ນເພື່ອເກືອໝູ

## 4.ການເຂົ້າຟາມລ້ຽງສັດ

ໃຫ້ແຕ່ພາຫານະ ແລະ ບຸກຄົນທີ່ໄດ້ຮັບອະນຸຍາດເທົ່ານັ້ນ ເຂົ້າຟາມຂອງທ່ານ

ບໍ່ອະນຸຍາດໃຫ້ໃຜເຂົ້າຄອກໝູຍົກເວັ້ນຄົນງານທີ່ຮັບຜິດຊອບເທົ່ານັ້ນ

## 5.ດູແລຝູງສັດໃຫ້ແຂງແຮງ

ສ້າງຄອກ/ຮົ້ວກັ້ນເພື່ອຫຼີກລ້ຽງການສຳຜັດກັບໝູໂຕອື່ນໆ. ແນະນຳໃຫ້ສ້າງຮົ້ວສອງຊັ້ນ.

ໝູທີ່ນຳເຂົ້າມາໃໝ່ຕ້ອງໄດ້ແຍກຈາກໂຕອື່ນໆຢ່າງໜ້ອຍ 30 ວັນ.



ໝູໂຕແມ່ຄວນປະສົມພັນກັບໝູຜູ້ທີ່ສຸຂະພາບແຂງແຮງດີເທົ່ານັ້ນ.

USAID
FROM THE AMERICAN PEOPLE

©FAO, 2021
CB4512LO